ພຣະຄຣິດທີ່ຊົງພຣະຊົນ

ປະຈັກພະຍານຂອງອັກຄະສາວົກ

ສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

ຂະນະທີ່ພວກເຮົາສະເຫລີມສະຫລອງການກຳເນີດຂອງພຣະເຢຊູຄຣິດເມື່ອສອງພັນປີທີ່ຜ່ານມາ, ພວກເຮົາຂໍມອບປະຈັກພະຍານຂອງພວກເຮົາເຖິງຄວາມເປັນຈິງໃນພຣະຊົນຊີບອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ ແລະ ເຖິງອຳນາດອັນບໍ່ມີຂອບເຂດຂອງການເສຍສະລະຊົດໃຊ້ທີ່ຍິ່ງໃຫຍ່ຂອງພຣະອົງ. ບໍ່ເຄີຍມີມະນຸດຄົນໃດ ທີ່ມີອິດທິພົນເໜືອກວ່າພຣະອົງຕໍ່ທຸກຄົນທີ່ເຄີຍມີຊີວິດຢູ່ ແລະ ຈະມີຊີວິດຢູ່ເທິງແຜ່ນດິນໂລກ.

ພຣະອົງເປັນພຣະເຢໂຮວາອົງຍິ່ງໃຫຍ່ຂອງພຣະຄຳພີເດີມ, ເປັນພຣະເມຊີອາຂອງພຣະຄຳພີໃໝ່. ພາຍໃຕ້ການຊີ້ນຳຂອງພຣະບິດາຂອງພຣະອົງ, ພຣະອົງໄດ້ເປັນພຣະຜູ້ສ້າງຂອງແຜ່ນດິນໂລກ. “ພຣະເຈົ້າໄດ້ຊົງສ້າງທຸກສິ່ງຂຶ້ນໂດຍທາງພຣະທຳ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີສິ່ງໜຶ່ງສິ່ງໃດທີ່ເປັນມາໂດຍນອກຈາກພຣະທຳ” (ໂຢຮັນ 1:3). ເຖິງແມ່ນປາດສະຈາກບາບ, ແຕ່ພຣະອົງຍັງໄດ້ຮັບບັບຕິສະມາ ເພື່ອໃຫ້ຄວາມຊອບທຳທັງໝົດສຳເລັດ. ພຣະອົງ “ໄດ້ໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ” (ກິດຈະການ 10:38), ແຕ່ຖືກກຽດຊັງເພາະການນັ້ນ. ພຣະກິດຕິຄຸນຂອງພຣະອົງຄືຂ່າວສານແຫ່ງສັນຕິສຸກ ແລະ ຄວາມປາດຖະໜາດີ. ພຣະອົງໄດ້ຂໍຮ້ອງໃຫ້ທຸກຄົນເຮັດຕາມຄຳສອນຂອງພຣະອົງ. ພຣະອົງໄດ້ຍ່າງໄປຕາມຖະໜົນຫົນທາງໃນຟີລິດສະຕິນ, ໄດ້ປິ່ນປົວຄົນເຈັບປ່ວຍ, ໄດ້ໂຜດຄົນຕາບອດໃຫ້ເຫັນຮຸ່ງ, ແລະ ໄດ້ນຳຄົນຕາຍເປັນຄືນມາ. ພຣະອົງໄດ້ສິດສອນຄວາມຈິງກ່ຽວກັບນິລັນດອນ, ຄວາມເປັນຈິງເຖິງການດຳລົງຢູ່ກ່ອນເກີດຂອງເຮົາ, ຈຸດປະສົງຂອງຊີວິດເຮົາເທິງແຜ່ນດິນໂລກ, ແລະ ສັນຕິສະຍະພາບສຳລັບບຸດ ແລະ ທິດາຂອງພຣະເຈົ້າໃນຊີວິດທີ່ຈະມາເຖິງ.

ພຣະອົງໄດ້ຈັດຕັ້ງສິນລະລຶກຂຶ້ນ ເພື່ອເຕືອນໃຈເຮົາເຖິງການເສຍສະລະຊົດໃຊ້ອັນຍິ່ງໃຫຍ່ຂອງພຣະອົງ. ພຣະອົງໄດ້ຖືກຈັບກຸມ ແລະ ຖືກປະນາມ ດ້ວຍຂໍ້ກ່າວຫາທີ່ບໍ່ມີມູນຄວາມຈິງ, ຖືກຕັດສິນລົງໂທດເພື່ອສະໜອງຄຳຮ້ອງຂອງຝູງຊົນ, ແລະ ຖືກສັ່ງໃຫ້ປະຫານຊີວິດຢູ່ເທິງໄມ້ກາງແຂນທີ່ພູກະໂຫລກຫົວ. ພຣະອົງໄດ້ສະລະພຣະຊົນຊີບເພື່ອຊົດໃຊ້ບາບຂອງມວນມະນຸດທັງປວງ. ຂອງປະທານຂອງພຣະອົງ ເປັນຂອງປະທານອັນລ້ຳຄ່າແທນທຸກຄົນທີ່ເຄີຍມີຊີວິດຢູ່ເທິງແຜ່ນດິນໂລກ.

ພວກເຮົາຂໍເປັນພະຍານຢ່າງໜັກແໜ້ນວ່າ ພຣະຊົນຊີບຂອງພຣະອົງ, ຊຶ່ງເປັນສູນກາງໃຫ້ປະຫວັດສາດຂອງມວນມະນຸດທັງປວງ, ບໍ່ໄດ້ເລີ່ມຕົ້ນໃນເມືອງເບັດເລເຮັມ ແລະ ຈະບໍ່ສິ້ນສຸດລົງທີ່ພູກະໂຫລກຫົວ. ພຣະອົງເປັນພຣະບຸດໜົວປີຂອງພຣະບິດາ, ເປັນພຣະບຸດອົງດຽວທີ່ຖືກຳເນີດໃນເນື້ອໜັງ, ເປັນພຣະຜູ້ໄຖ່ຂອງໂລກ.

ພຣະອົງໄດ້ລຸກຂຶ້ນຈາກຄວາມຕາຍເພື່ອ “ເປັນເຊັ່ນແລກໃນພວກຄົນທີ່ລ່ວງລັບໄປແລ້ວນັ້ນ” (1 ໂກຣິນໂທ 15:20). ໃນຖານະພຣະຜູ້ເປັນເຈົ້າທີ່ຟື້ນຄືນພຣະຊົນແລ້ວ, ພຣະອົງໄດ້ສະເດັດໄປຢ້ຽມຢາມຜູ້ທີ່ພຣະອົງຮັກຕອນພຣະອົງຍັງຊົງພຣະຊົນ. ພຣະອົງກໍຍັງໄດ້ປະຕິບັດສາດສະໜາກິດຕ່າງໆ “ຝູງແກะອື່ນ” ຂອງພຣະອົງ (ໂຢຮັນ 10:16) ໃນອາເມຣິກາສະໄໝບູຮານນຳອີກ. ໃນໂລກສະໄໝໃໝ່, ພຣະອົງ ແລະ ພຣະບິດາຂອງພຣະອົງໄດ້ມາປະກົດຕໍ່ຊາຍໜຸ່ມໂຈເຊັບ ສະມິດ, ໃນການເລີ່ມຕົ້ນ “ເວລາກຳນົດຄົບບໍລິບູນ” ຕາມຄຳສັນຍາອັນຍາວນານ (ເອເຟໂຊ 1:10).

ກ່ຽວກັບພຣະຄຣິດທີ່ຊົງພຣະຊົນ, ສາດສະດາໂຈເຊັບໄດ້ຂຽນວ່າ: “ພຣະເນດຂອງພຣະອົງເປັນດັ່ງແປວໄຟ; ພຣະເກສາຂອງພຣະອົງຂາວເໝືອນຫິມະບໍລິສຸດ; ພຣະພັກຂອງພຣະອົງຮຸ່ງເຫລື້ອມແຈ້ງກວ່າຄວາມສະຫວ່າງຂອງດວງຕາເວັນ; ແລະ ສຸລະສຽງຂອງພຣະອົງຄືກັບນ້ຳໄຫລຢ່າງໄວຂອງແມ່ນ້ຳອັນກວ້າງໃຫຍ່, ແມ່ນແຕ່ສຸລະສຽງຂອງພຣະເຢໂຮວາ, ກ່າວວ່າ:

“ເຮົາເປັນຜູ້ທຳອິດ ແລະ ຜູ້ສຸດທ້າຍ; ເຮົາຄືເຂົາຜູ້ນັ້ນທີ່ມີຊີວິດ, ເຮົາຄືຜູ້ນັ້ນທີ່ຖືກປະຫານ; ເຮົາຄືຜູ້ວິງວອນແທນພວກເຈົ້າບໍ່ພຣະບິດາ” (ຄພ 110:3–4).

ສາດສະດາໄດ້ປະກາດກ່ຽວກັບພຣະອົງວ່າ: “ແລະ ບັດນີ້, ຫລັງຈາກປະຈັກພະຍານຫລາຍຢ່າງທີ່ໃຫ້ໄວ້ເຖິງພຣະອົງ, ນີ້ຄືປະຈັກພະຍານ, ສຸດທ້າຍຂອງທັງໝົດ, ຊຶ່ງພວກເຮົາມອບໃຫ້ເຖິງພຣະອົງ: ວ່າພຣະອົງຊົງພຣະຊົນ!

“ເພາະພວກເຮົາໄດ້ເຫັນພຣະອົງ ແມ່ນແຕ່ຢູ່ທາງເບື້ອງຂວາພຣະຫັດຂອງພຣະເຈົ້າ; ແລະ ພວກເຮົາໄດ້ຍິນສຸລະສຽງກ່າວເປັນພະຍານວ່າ ພຣະອົງເປັນພຣະອົງດຽວທີ່ຖືກຳເນີດຈາກພຣະບິດາ—

“ວ່າໂດຍພຣະອົງ, ແລະ ຜ່ານພຣະອົງ, ແລະ ຈາກພຣະອົງ, ໂລກຕ່າງໆຈຶ່ງຖືກສ້າງຂຶ້ນມາ, ແລະ ຜູ້ອາໄສຢູ່ໃນນັ້ນເປັນບຸດ ແລະ ທິດາທີ່ຖືກຳເນີດຂອງພຣະເຈົ້າ” (ຄພ 76:22–24).

ພວກເຮົາຂໍປະກາດຢ່າງໜັກແໜ້ນວ່າ ຖານະປະໂລຫິດຂອງພຣະອົງ ແລະ ສາດສະໜາຈັກຂອງພຣະອົງໄດ້ຖືກຟື້ນຟູເທິງແຜ່ນດິນໂລກ—ຖືກສ້າງຂຶ້ນເທິງຮາກຖານ ຊຶ່ງພວກອັກຄະສາວົກ ແລະ ບັນດາສາດສະດາໄດ້ວາງລົງແລ້ວ, ພຣະເຢຊູຄຣິດເອງເປັນຫີນເສົາເອກ (ເບິ່ງ ເອເຟໂຊ 2:20).

ພວກເຮົາເປັນພະຍານວ່າ ພຣະອົງຈະສະເດັດກັບມາຍັງແຜ່ນດິນໂລກອີກໃນມື້ໜຶ່ງ. “ທຸກປະຊາຊາດກໍຈະໄດ້ເຫັນສະຫງ່າລາສີຂອງພຣະຜູ້ເປັນເຈົ້າ” (ເອຊາຢາ 40:5). ພຣະອົງຈະປົກຄອງເປັນຈອມກະສັດ ແລະ ຈອມເຈົ້ານາຍ, ແລະ ທຸກຫົວເຂົ່າຈະຄຸລົງ ແລະ ທຸກລີ້ນຈະກ່າວໃນການນະມັດສະການຢູ່ຕໍ່ພຣະພັກຂອງພຣະອົງ. ເຮົາແຕ່ລະຄົນຈະຢືນຮັບການພິພາກສາຈາກພຣະອົງຕາມວຽກງານຂອງເຮົາ ແລະ ຕາມຄວາມປາດຖະໜາຂອງໃຈເຮົາ.

ພວກເຮົາສະແດງປະຈັກພະຍານ, ໃນຖານະອັກຄະສາວົກທີ່ໄດ້ຮັບການແຕ່ງຕັ້ງຢ່າງຖືກຕ້ອງຂອງພຣະອົງ—ວ່າ ພຣະເຢຊູຄື ພຣະຄຣິດທີ່ຊົງພຣະຊົນ, ພຣະບຸດທີ່ເປັນອະມະຕະຂອງພຣະເຈົ້າ. ພຣະອົງເປັນກະສັດເອມານູເອນຜູ້ຍິ່ງໃຫຍ່, ຜູ້ຊຶ່ງທຸກວັນນີ້ປະທັບຢືນຢູ່ເບື້ອງຂວາພຣະຫັດຂອງພຣະບິດາຂອງພຣະອົງ. ພຣະອົງເປັນຄວາມສະຫວ່າງ, ເປັນຊີວິດ, ແລະ ເປັນຄວາມຫວັງຂອງໂລກ. ທາງຂອງພຣະອົງຄືທາງທີ່ນຳໄປສູ່ຄວາມສຸກໃນຊີວິດນີ້ ແລະ ຊີວິດນິລັນດອນໃນໂລກທີ່ຈະມາເຖິງ. ຂອບຄຸນພຣະເຈົ້າສຳລັບຂອງປະທານທີ່ຫາອັນປຽບບໍ່ໄດ້ນັ້ນ ຊຶ່ງເປັນພຣະບຸດແຫ່ງສະຫວັນຂອງພຣະອົງ.

ຝ່າຍປະທານສູງສຸດ

Gordon B. Hinckley
Thomas S. Monson
James E. Faust

ວັນທີ 1 ເດືອນມັງກອນ, 2000

ກຸ່ມອັກຄະສາວົກສິບສອງ

Boyd K. Packer
L. Tom Perry
David B. Haight
Neal A. Maxwell
Russell M. Nelson
Dallin H. Oaks
M. Russell Ballard
Joseph B. Wirthlin
Richard G. Scott
Robert D. Hales
Jeffrey R. Holland
Henry B. Eyring

Unofficial poster layout of the text published on churchofjesuschrist.org. Not an official publication of The Church of Jesus Christ of Latter-day Saints. Generated by Urim, urim.samuelbaird.com